

# 8 ການຮຽນຮູ້ວິທີນຳໃຊ້ພາສາມື

ການຮຽນພາສາມືສຳລັບເດັກທີ່ອາຍຸຍັງນ້ອຍ ແມ່ນເປັນສິ່ງທີ່ງ່າຍ, ທຳອິດເດັກອາດຮຽນເອົາບັນດາ ສັນຍະລັກຕ່າງໆທີ່ຄົນອື່ນໃຊ້ ໂດຍສະເພາະແມ່ນບຸກ ຄົນ ແລະ ສິ່ງຂອງທີ່ເດັກພົບເຫັນຢູ່ເລື້ອຍໆ ຫຼັງຈາກ ນັ້ນ ເດັກຈຶ່ງຈະເລີ່ມຮຽນໝູນໃຊ້ສັນຍະລັກທີ່ມີ ຄວາມສຳຄັນສຳລັບເຂົາ ແລະ ເລີ່ມຮຽນຮູ້ ບັນດາ ສັນຍະລັກຕ່າງໆອີກ.

ສັນຍະລັກແຕ່ລະແບບ ຈະຊ່ວຍໃຫ້ເດັກຮຽນຮູ້ ໂລກອ້ອມຂ້າງເດັກໄດ້ຫຼາຍຂຶ້ນ. ເມື່ອທັກສະ ພາສາ ຂອງເດັກພັດທະນາຂຶ້ນ, ເຂົາຈະເລີ່ມຮູ້ຈັກການນຳ ເອົາສັນຍະລັກມາປະສົມກັນ. ສິ່ງນີ້ຍັງຈະຊ່ວຍພັດ ທະນາດ້ານຈິດໃຈຂອງເດັກໄດ້ນຳອີກ. ຖ້າຫາກທ່ານ ແລະ ລູກຂອງທ່ານຫາກມີຄວາມສຸກກັບການໝູນໃຊ້ ພາສາມື ກໍ່ຈະເຮັດໃຫ້ການຮຽນຮູ້ພາສາຂອງເດັກໄດ້ ຮັບຜົນດີ.

ວິທີ ທີ່ດີທີ່ສຸດສຳລັບທ່ານ ແລະ ຄອບຄົວໃນການ ຮຽນພາສາມືທີ່ໝູນໃຊ້ໃນຂົງເຂດຂອງທ່ານນັ້ນ ແມ່ນ ການໃຫ້ຄົນຫູໜວກສອນພາສາມືໃຫ້ທ່ານ.

ຖ້າຫາກບໍ່ມີຜູ້ໃດສອນພາສາມືໃຫ້ທ່ານໄດ້, ທ່ານ ອາດສຶກສາຕາມປຶ້ມກ່ຽວກັບການໝູນໃຊ້ພາສາມືກັບ ເດັກຫູໜວກ. ແຕ່ການໝູນໃຊ້ພາສາມືຈາກປຶ້ມ ອາດ ຈະຫຍຸ້ງຍາກ ແລະ ມີປະສິດທິຜົນຕ່ຳກວ່າການຮຽນ ຈາກຄົນຫູໜວກ.




ໃນພາກນີ້, ພວກເຮົາຈະສະແດງຮູບບຸກຄົນ ທີ່ໝູນໃຊ້ພາສາມື ແລະ ວິທີໃນການນຳເອົາບັນດາສັນຍະ ລັກຕ່າງໆ ມາປະສົມເຂົ້າກັນເພື່ອສ້າງເປັນປະໂຫຍກໃນພາສາມືດັ່ງນີ້:

*ໃນຮູບນີ້ບໍ່ໄດ້ສະ ແດງໃຫ້ເຫັນທຸກ ສັນຍະລັກຢູ່ໃນປະ ໂຫຍກພາສາມື.*







*ພວກເຮົາອາດຈະສະແດງ ໃຫ້ເດັກເຫັນບັນດາສັນຍະ ລັກ ທີ່ສ້າງເປັນປະໂຫຍກ ໃສ່ໃນລ໊ອກນ້ອຍໆແບບນີ້, ເຊິ່ງຈະອ່ານແຕ່ເທິງລົງລຸ່ມ.*

# ▶ ວິທີຊ່ວຍໃຫ້ເດັກເຂົ້າໃຈສັນຍະລັກໃໝ່

ໃນເບື້ອງຕົ້ນໃຫ້ເດັກຮຽນຮູ້ສັນຍະລັກ ທີ່ແທນໃຫ້ສິ່ງຂອງ ແລະ ບຸກຄົນທີ່ມີຄວາມສຳຄັນສຳລັບເຂົາ. ສະນັ້ນ ຈົ່ງສັງເກດວ່າບຸກຄົນຜູ້ໃດ ຫຼື ສິ່ງໃດ ທີ່ເດັກນ້ອຍມີຄວາມສົນໃຈ ເພື່ອຊ່ວຍໃຫ້ເດັກຮຽນສັນຍະລັກທຳອິດ:







**1** ພະຍາຍາມເຮັດສັນຍະລັກ (ໃຊ້ພາສາມື) ຢູ່ໃກ້ໆກັບວັດຖຸ ຫຼື ຊີ້ໃສ່ບຸກຄົນທີ່ເຮົາໝາຍເຖິງ ເພື່ອໃຫ້ເດັກສາມາດເຊື່ອມໂຍງວັດຖຸ 2 ສິ່ງ. ໃຊ້ການສະແດງສີໜ້າເພື່ອບອກໃຫ້ເດັກຮູ້ວ່າ ມີສິ່ງສຳຄັນກຳລັງເກີດຂຶ້ນ.




**2** ໃຊ້ສັນຍະລັກສະແດງເຖິງຊື່ຂອງບຸກຄົນ ຫຼື ວັດຖຸພ້ອມທັງໝູນໃຊ້ສັນຍະລັກນັ້ນຫຼາຍໆຄັ້ງຊ້ຳໆກັນ ແລະ ພະຍາຍາມໃຫ້ເດັກເຫັນສີໜ້າ ແລະ ມືຂອງທ່ານເມື່ອທ່ານໃຊ້ສັນຍະລັກກັບເຂົາ.

**3** ສັງເກດເບິ່ງປະຕິກິລິຍາຂອງເດັກ. ເຂົາມີການຕອບສະໜອງທີ່ສະແດງວ່າເຂົາເຂົ້າໃຈບໍ?, ຖ້າມີກໍ່ຈົ່ງຊົມເຊີຍຍ້ອງຍໍເດັກ. ຖ້າເດັກບໍ່ມີການຕອບສະໜອງກໍ່ຈົ່ງໃຊ້ສັນຍະລັກດັ່ງກ່າວອີກຈັກ 2-3 ເທື່ອ.




**4** ໃຊ້ສັນຍະລັກໂຕນັ້ນຫຼາຍໆຄັ້ງຕະຫຼອດມື້. ກະຕຸກຊຸກຍູ້ໃຫ້ສະມາຊິກໃນຄອບຄົວຜູ້ອື່ນໆໃຊ້ສັນຍະລັກດັ່ງກ່າວນຳ.

ຈົ່ງພະຍາຍາມມີຄວາມອົດທົນ ເພາະມັນອາດໃຊ້ເວລາຈັກໄລຍະໜຶ່ງ ກວ່າທີ່ເດັກ ຈະຮູ້ຈັກສັນຍະລັກໂຕທຳອິດ.

# ຊ່ວຍເຫຼືອເດັກໃນການຮຽນສັນຍະລັກຕ່າງໆທີ່ແຕກຕ່າງກັນ

ນອກຈາກການຮຽນຊື່ຂອງວັດຖຸ ແລະ ບຸກຄົນແລ້ວ. ລູກຂອງທ່ານຕ້ອງຮຽນສັນຍະລັກ ຕ່າງໆໃນພາສາມືອີກ. ເຊິ່ງຈະເຮັດໃຫ້ເດັກໄດ້ຮຽນຮູ້ໂລກອ້ອມຂ້າງ ແລະ ກໍ່ຈະເປັນການຈັດກຽມໃຫ້ເດັກສາມາດຄິດ ແລະ ໃຊ້ສັນຍະລັກໃນປະໂຫຍກໄດ້ໃນຕໍ່ໄປ.

ທ່ານສາມາດໝູນໃຊ້ຂັ້ນຕອນທີ່ຄືກັນກັບໃນໜ້າກ່ອນນີ້ ເພື່ອສອນເດັກກ່ຽວກັບສັນຍະລັກທີ່ສະແດງການກະທຳ, ຄວາມຮູ້ສຶກ ແລະ ການພັນລະນາ.

- **ສັນຍະລັກທີ່ສະແດງເຖິງການກະທຳ:**

ສັນຍະລັກໃນພາສາມືທີ່ແປວ່າ "ກິນ" "ນອນ" ແລະ "ດື່ມ", ໂດຍທົ່ວໄປແມ່ນສັນຍະລັກທຳອິດທີ່ເດັກໄດ້ຮຽນ.







- **ສັນຍະລັກທີ່ສະແດງເຖິງຄວາມຮູ້ສຶກ:**

ສັນຍະລັກໃນພາສາມືທີ່ແປວ່າ "ມ່ວນ", "ໂສກເສົ້າ" ແລະ "ໃຈຮ້າຍ" ກໍ່ເປັນສັນຍະລັກທີ່ສະແດງເຖິງຄວາມຮູ້ສຶກທີ່ເດັກມັກຈະໄດ້ເຮັດເປັນເທື່ອທຳອິດ.




- **ສັນຍະລັກທີ່ສະແດງເຖິງການພັນລະນາ:**

ສັນຍະລັກທີ່ແປວ່າ "ປຽກ", "ແຫ້ງ", "ຮ້ອນ" ຫຼື "ໜາວ" ກໍ່ເປັນບັນດາສັນຍະລັກກ່ຽວກັບການພັນລະນາທີ່ເດັກ ໄດ້ຮຽນຄັ້ງທຳອິດ.






**ບັນດາສັນຍະລັກໃນພາສາມືອື່ນໆທີ່ມີຄວາມສຳຄັນ ເຊິ່ງເດັກຄວນຮູ້ແມ່ນ:**

- ສັນຍະລັກທີ່ໃຊ້ບອກຊື່ (ຊື່ທີ່ຕັ້ງໃຫ້ແຕ່ລະຄົນ)







ທ່ານສາມາດສ້າງສັນຍະລັກ ສຳລັບຊື່ຂອງແຕ່ລະຄົນໃນຄອບຄົວ. ສັນຍະລັກດັ່ງກ່າວຈະຈື່ໄດ້ງ່າຍ ຖ້າເຮັດໃຫ້ມັນຄ້າຍຄືກັບຄົນຜູ້ນັ້ນແນວໃດແນວໜຶ່ງ. ອ້າຍເອື້ອຍນ້ອງສອງຄົນນີ້ສ້າງສັນຍະລັກທີ່ໃຊ້ແທນຊື່ພວກເຂົາໂດຍອີງໃສ່ ລັກສະນະຂອງພວກເຂົາ:

*ອ່ອນສີ ມີຜົມກູດຢູ່ເທິງ ໜ້າຜາກຂອງລາວ.*





*ຄຳຫຼ້າ ມີຂີ້ແມງວັນຢູ່ແກ້ມ.*






## ການຮຽນຮູ້ການໃຊ້ສັນຍະລັກໃນພາສາມື



ຮູບແບບນີ້ງ່າຍ　　ຮູບແບບນີ້ຍາກຂຶ້ນແດ່

ເມື່ອເດັກຫູໜວກເຫັນຄົນອ້ອມຂ້າງຂອງເຂົານຳໃຊ້ພາສາມືເພື່ອສື່ສານ, ເຂົາກໍ່ຈະເລີ່ມ ໃຊ້ພາສາມືດ້ວຍຕົວຂອງເຂົາເອງໂລດ. ຄວນຈື່ໄວ້ວ່າ ບາງສັນຍະລັກກໍ່ງ່າຍ ບາງສັນຍະລັກກໍ່ຍາກ.

ທຳອິດທີ່ເດັກເລີ່ມຮຽນໃຊ້ພາສາໃບ້, ເຂົາຈະເລີ່ມຮຽນການວາງມືກ່ອນ. ຈາກນັ້ນ ຈິ່ງຮຽນຍ້າຍມືໄປຕາມທິດທາງທີ່ຖືກຕ້ອງ, ສຸດທ້າຍຈິ່ງຮຽນການຈັດມືແລະ ນິ້ວໃຫ້ເປັນຮູບຮ່າງທີ່ຖືກຕ້ອງ.

ໃນຕອນຕົ້ນເດັກອາດຈະຍັງບໍ່ສາມາດໃຊ້ສັນຍະລັກໄດ້ຢ່າງຖືກຕ້ອງຮ້ອຍເປີເຊັນ, ເຊິ່ງທ່ານອາດຈະບໍ່ເຂົ້າໃຈວ່າລາວເຮັດສັນຍະລັກຫຍັງ. ແຕ່ກໍ່ຈົ່ງຍ້ອງຍໍ ແລະພະຍາຍາມຫຼາຍໆຄັ້ງ. ບໍ່ຄວນກັງວົນເມື່ອເດັກເຮັດສັນຍະລັກໄດ້ບໍ່ຈະແຈ້ງ.

## ► ວິທີກະຕຸ້ນໃຫ້ລູກຂອງທ່ານນຳໃຊ້ສັນຍະລັກໃນພາສາມື

**1** ສັງເກດເບິ່ງວ່າຄວາມໝາຍຂອງຂໍ້ຄວາມ ທີ່ເຂົາກຳລັງສື່ໃຫ້ທ່ານ ໂດຍຜ່ານທ່າທີ, ສຽງ ແລະ ສີໜ້າຂອງເດັກ.



**2** ສະແດງຄືນສັນຍະລັກສຳລັບຂໍ້ຄວາມທີ່ເຂົາກຳລັງສື່ໃຫ້ທ່ານ.




**3** ເນັ້ນຄືນສັນຍະລັກດັ່ງກ່າວ ແລະ ເຮັດຄືນຊ້ຳອີກຫຼາຍໆຄັ້ງ. ກະຕຸ້ນໃຫ້ເດັກເຮັດຕາມທ່ານ.

ຖ້າເດັກພະຍາຍາມເຮັດຕາມທ່ານ ກໍ່ຈົ່ງ ຍ້ອງຍໍເຂົາ. ຖ້າເຂົາເຮັດບໍ່ຖືກ ກໍ່ບໍ່ຟ້າວບອກ, ແທນທີ່ຈະບອກເຂົາວ່າ ເຮັດບໍ່ຖືກກໍ່ໃຫ້ທ່ານເຮັດສັນຍະລັກທີ່ຖືກຕ້ອງນັ້ນຊ້ຳຄືນອີກ.




**4** ເມື່ອເດັກໄດ້ຮຽນຮູ້ສັນຍະລັກແລ້ວ, ຈົ່ງກະຕຸ້ນໃຫ້ເຂົາໄດ້ໃຊ້ມັນເລື້ອຍໆ ແລະ ຊອກຫາວິທີ ທີ່ຈະນຳໃຊ້ສັນຍະລັກນັ້ນໃນກິດຈະວັດປະຈຳວັນຂອງທ່ານ.



ຖາມຄຳຖາມທີ່ສາມາດຕອບດ້ວຍສັນຍະລັກໂຕດຽວ.










ຖ້າລູກຂອງທ່ານຕອບໄດ້, ຊົມເຊີຍເຂົາ. ຖ້າຕອບບໍ່ໄດ້ ໝາຍຄວາມວ່າ:

- ເຂົາອາດຈະບໍ່ເຂົ້າໃຈສັນຍະລັກນັ້ນ.
- ເຂົາອາດຈະບໍ່ເຂົ້າໃຈຄວາມໝາຍຂອງຄຳຖາມ ຫຼື ສິ່ງທີ່ທ່ານຕ້ອງການຢາກໃຫ້ຕອບ.

ວິທີໜຶ່ງທີ່ຈະສອນໃຫ້ເດັກຮູ້ຕອບຄຳຖາມ ທຳອິດແມ່ນຕອບໃຫ້ເຂົາກ່ອນ. ຫຼັງຈາກນັ້ນ ຈັກໜ່ອຍເຂົາກໍ່ຈະເຂົ້າໃຈຄວາມໝາຍ.






# ▶ ວິທີກະຕຸ້ນໃຫ້ເດັກສື່ສານຄວາມຕ້ອງການພື້ນຖານ

ເມື່ອເດັກນ້ອຍຫູໜວກຕ້ອງການສິ່ງໃດສິ່ງໜຶ່ງ ເດັກຈະມີຄວາມກະຕືລືລົ້ນ ທີ່ຈະຮຽນພາສາມື ເພື່ອຊ່ວຍໃຫ້ພວກເຂົາໄດ້ມາໃນສິ່ງທີ່ຕ້ອງການ. ຕໍ່ໄປນີ້ແມ່ນບາງວິທີ ທີ່ກະຕຸ້ນໃຫ້ເດັກ ໝູນໃຊ້ພາສາມື ເພື່ອສື່ສານຄວາມຕ້ອງການແບບພື້ນຖານ:




- ເມື່ອເຫັນວ່າເດັກຕ້ອງການສິ່ງໃດສິ່ງໜຶ່ງ, ຈົ່ງກະຕຸ້ນໃຫ້ເຂົາໝູນໃຊ້ພາສາມື ເພື່ອໃຫ້ໄດ້ສິ່ງທີ່ຕ້ອງການ.

- ສ້າງສະຖານະການໃດໜຶ່ງ ທີ່ເຮັດໃຫ້ເດັກຕ້ອງໄດ້ໝູນໃຊ້ພາສາມື ເພື່ອຂໍສິ່ງໃດໜຶ່ງ.




*ພໍ່ຂອງບຸນມີ ຢຸດເກມທີ່ກຳລັງຫຼິ້ນ ຈົນບຸນມີ ຂໍໃຫ້ລາວສືບຕໍ່ຫຼິ້ນອີກ.*

ຖ້າຫາກເດັກໃຊ້ທ່າທາງສັນຍະລັກທີ່ແປໄດ້ຫຼາຍໆ ຄວາມໝາຍ, ຈົ່ງສະແດງໃຫ້ເຂົາຮູ້ວ່າທ່ານສັບສົນ. ກະຕຸ້ນໃຫ້ເດັກລາຍລະອຽດຂອງສິ່ງທີ່ເຂົາຕ້ອງການຕື່ມ ໂດຍການໃຊ້ພາສາມື.






## ► ວິທີຊ່ວຍໃຫ້ເດັກຮູ້ຈັກ ການຂໍຮ້ອງ ແລະ ປະຕິບັດຕາມຄຳຂໍຮ້ອງ ແບບງ່າຍດາຍ

ເມື່ອລູກຂອງທ່ານສາມາດຈື່ຈຳຊື່ຂອງວັດຖຸ, ບຸກຄົນ ແລະ ຊື່ກິດຈະກຳຕ່າງໆ. ລາວກໍ່ສາມາດເລີ່ມເຂົ້າໃຈຄຳຂໍຮ້ອງແບບງ່າຍໆຂອງທ່ານໄດ້. ໂດຍເລີ່ມຈາກຄຳຂໍແບບສັ້ນໆ ໝູນໃຊ້ສັນຍະລັກທີ່ເດັກໄດ້ຮູ້ແລ້ວ ພ້ອມທັງກິລິຍາທ່າທາງ ເພື່ອເຮັດໃຫ້ຂໍ້ຄວາມຂອງທ່ານຈະແຈ້ງຂຶ້ນ. ໃຫ້ເວລາເຂົາໃນການຕອບຈັກໜ້ອຍໜຶ່ງ ແລະ ຖ້າຈຳເປັນກໍ່ໃຫ້ທ່ານເຮັດຄືນສັນຍະລັກ ດັ່ງກ່າວຄືນອີກ.




ທຳອິດຈົ່ງສ້າງຄຳຂໍຮ້ອງເພື່ອຂໍເອົາວັດຖຸສິ່ງຂອງ ຫຼື ບຸກຄົນທີ່ເດັກສາມາດພົບເຫັນຢູ່ໃກ້ໆຕົວເຂົາ.




ຫຼັງຈາກນັ້ນ ສ້າງຄຳຂໍຮ້ອງສຳລັບວັດຖຸສິ່ງຂອງຫຼືບຸກຄົນທີ່ເດັກບໍ່ສາມາດເຫັນ ໂດຍໃຊ້ບັນດາສັນຍະລັກທີ່ໄດ້ສອນເຂົາແລ້ວ.



ຫຼັງຈາກນັ້ນ ເດັກຫູໜວກຈະເລີ່ມຮຽນຮູ້ ການສ້າງຄຳຂໍຮ້ອງດ້ວຍຕົວຂອງເຂົາເອງ. ທຸກໆ ຄົນຄວນສະໜັບສະໜູນເດັກ ເມື່ອເຂົາພະຍາ ຍາມຂໍຮ້ອງສິ່ງໃດໜຶ່ງ.




## ► ວິທີກະຕຸ້ນໃຫ້ເດັກໄດ້ຮຽນຮູ້ສັນຍະລັກໃໝ່

ວິທີ ທີ່ດີທີ່ສຸດໃນການກະຕຸ້ນໃຫ້ເດັກໄດ້ຮຽນຮູ້ ສັນຍະລັກໃໝ່ໆ ແມ່ນການສື່ສານກັບເດັກໃຫ້ຫຼາຍເທົ່າທີ່ຈະຫຼາຍໄດ້ ໂດຍກະຕຸ້ນໃຫ້ເດັກຕອບຄືນຂໍ້ຄວາມທີ່ທ່ານສື່ງ ຫຼື ສິ່ງທີ່ທ່ານໂອ້ລົມນຳ ໃຫ້ລາວໂດຍຜ່ານພາສາມື. ທັງໝົດນີ້ແມ່ນວິທີ ຈຳນວນໜຶ່ງສຳລັບການສື່ສານກັບເດັກໃນແຕ່ລະມື້.

- ໃນໄລຍະເວລາເຮັດກິດຈະວັດປະຈຳວັນ ແມ່ນໄລຍະທີ່ດີສຳລັບການຮຽນຮູ້ສັນຍະລັກໃໝ່. ເຊິ່ງກໍ່ເປັນໂອກາດທີ່ເດັກຈະໄດ້ໝູນໃຊ້ສັນຍະລັກດັ່ງກ່າວຊ້ຳໆກັນ.




*ຈົ່ງໝັ້ນໃຈວ່າທຸກໆເທື່ອ ທີ່ທ່ານໃຊ້ພາສາມືກັບເດັກ, ເດັກໄດ້ເບິ່ງທ່ານນຳ.*




- ລອງເຮັດເວົ້າຜິດເພື່ອກະຕຸ້ນໃຫ້ເດັກບອກທ່ານໃນສິ່ງທີ່ຖືກຕ້ອງເຊັ່ນ: ແມ່ຂອງເດັກຜູ້ນີ້ ເຮັດຫຼິ້ງເອີ້ນຊື່ອ້າຍຂອງລາວ ແທນຊື່ຂອງລາວ.



ຄົ້ນຄິດຫາເກມຫຼິ້ນ ທີ່ປະກອບມີສັນຍະລັກພາສາມື ໃໝ່ໆ. ຍົກຕົວຢ່າງ, ເດັກເຫຼົ່ານີ້ ກຳລັງຫຼິ້ນເກມເພື່ອ ຊອກຫາສິ່ງຂອງທີ່ເຊື່ອງໄວ້ ໂດຍການບອກຊື່ສິ່ງເຫຼົ່າ ນັ້ນເປັນສັນຍະລັກ. ໃນຂະນະທີ່ຫຼິ້ນເກມ ເດັກກໍ່ກຳລັງ ຮຽນສັນຍະລັກໃໝ່ໆຈຳນວນໜຶ່ງໄປພ້ອມ.






# ຄວາມເຂົ້າໃຈກ່ຽວກັບກຸ່ມສັນຍະລັກ

ຫຼັງຈາກໄດ້ໃຊ້ສັນຍະລັກດ່ຽວມາໄລຍະໜຶ່ງແດ່ ແລ້ວ, ເດັກກໍ່ຈະເລີ່ມນຳເອົາສັນຍະລັກດັ່ງກ່າວມາ ປະກອບເຂົ້າກັນ ເພື່ອເຮັດໃຫ້ການສະແດງອອກ ທາງຄວາມນຶກຄິດຂອງພວກເຂົາມີຄວາມສົມບູນ ຂຶ້ນ. ການຮຽນຮູ້ການປະສົມສັນຍະລັກເຂົ້າກັນ ເພື່ອສະແດງອອກທາງດ້ານຄວາມຄິດທີ່ສົມບູນ ຂອງເຂົາເຈົ້ານີ້ ແມ່ນເສັ້ນທາງກ້າວສູ່ການໝູນໃຊ້ ພາສາທີ່ຄົບຖ້ວນສົມບູນ ຂອງເດັກຫູໜວກ.

ການນຳເອົາກຸ່ມສັນຍະລັກມາປະສົມເຂົ້າກັນ ເປັນບາດກ້າວໄປຂ້າງໜ້າທີ່ສຳຄັນຂອງເດັກມັນ ຊ່ວຍໃຫ້ເດັກສື່ສານກ່ຽວກັບວັດຖຸ ຫຼື ບຸກຄົນອ້ອມ ຂ້າງ ໄດ້ດີຂຶ້ນກວ່າການບອກແຕ່ພຽງຊື່ເທົ່ານັ້ນ. ໂດຍທຳອິດເດັກຈະນຳເອົາສັນຍະລັກ 2 ອັນມາ ປະສົມເຂົ້າກັນ ຈາກນັ້ນກໍ່ອາດຈະແມ່ນ 3 ສັນຍະ ລັກ ຫຼື ສຸດທ້າຍ ຈຶ່ງສາມາດສ້າງກຸ່ມສັນຍະລັກທີ່ ຍາວຂຶ້ນໄດ້. ທຳອິດເດັກຕ້ອງໄດ້ເຂົ້າໃຈ ວິທີທີ່ຄົນ ອື່ນເຮັດກ່ອນ ຈາກນັ້ນ ເດັກຈຶ່ງຈະສາມາດເຮັດ ຕາມໄດ້.

# ► ວິທີຊ່ວຍໃຫ້ເດັກເຂົ້າໃຈຄວາມໝາຍຂອງກຸ່ມສັນຍະລັກ

**1** ເມື່ອເດັກຫູໜວກເວົ້າຊື່ຂອງວັດຖຸ ຫຼືບຸກຄົນ, ໃຫ້ທ່ານຈົ່ງຂະຫຍາຍຊື່ຂອງວັດຖຸ ຫຼື ບຸກຄົນ ທີ່ເຂົາເວົ້າ.




ເນັ້ນຄືນກຸ່ມສັນຍະລັກທີ່ທ່ານຕ້ອງການໃຫ້ເຂົາຮຽນ ແລະ ເຮັດຄືນອີກຫຼາຍໆຄັ້ງ.




**2** ສັງເກດເບິ່ງຄຳຕອບຂອງເດັກ, ເດັກໄດ້ມີການຕອບສະໜອງແນວໃດແນວໜຶ່ງວ່າເຂົາເຂົ້າໃຈບໍ? ຖ້າມີກໍ່ຈົ່ງຍ້ອງຍໍເຂົາ, ຖ້າບໍ່ມີກໍ່ຈົ່ງເຮັດຄືນອີກຫຼາຍໆເທື່ອ.




**3** ໃຊ້ສັນຍະລັກດັ່ງກ່າວ ໃຫ້ຫຼາຍເທົ່າທີ່ທ່ານຈະເຮັດໄດ້ໝົດມື້. ພ້ອມ ທັງກະຕຸ້ນໃຫ້ສະມາຊິກໃນຄອບຄົວໃຊ້ສັນຍະລັກດັ່ງກ່າວນຳອີກ.




*ໃນຕົວຢ່າງຂ້າງເທິງນີ້, ໃຫ້ພໍ່ ແລະ ແມ່ຂອງເດັກໄດ້ນຳເອົາສັນຍະລັກ ທີ່ໃຊ້ແທນຊື່ຂອງວັດຖຸ (ຕົ້ນໄມ້) ມາປະສົມກັບຄຳທີ່ໃຊ້ຂະຫຍາຍຄວາມໝາຍຂອງມັນ (ໃຫຍ່).*



ການຮູ້ຈັກຄຳສັບ ແລະ ຮູ້ຈັກໃຊ້ພາສາ ຊ່ວຍໃຫ້ເດັກມີການພັດທະນາທາງດ້ານແນວຄິດຈິດໃຈ. ເມື່ອເດັກຮູ້ຈັກຄຳສັບ ເຊັ່ນ: “ ໃຫຍ່ “ ແລະ “ນ້ອຍ”, ເດັກຈະໝູນໃຊ້ຄຳສັບເຫຼົ່ານີ້ ເພື່ອສະແດງຄວາມຮູ້ສຶກນຶກຄິດທີ່ຍາກຂຶ້ນ. ເປັນຕົ້ນແມ່ນການສົມທຽບວັດຖຸສິ່ງຂອງໃດໜຶ່ງ.

ໃນການສອນໃຫ້ເດັກນ້ອຍຫູໜວກຮູ້ສັນຍະລັກທີ່ເປັນກຸ່ມ ຈົ່ງພະຍາຍາມນຳເອົາຊື່ຂອງວັດຖຸ ຫຼື ບຸກຄົນມາປະສົມເຂົ້າກັນດັ່ງນີ້:

- ຄຳສັບ ຫຼື ສັນຍະລັກ ທີ່ສະແດງ ທີ່ຕັ້ງຂອງວັດຖຸ ຫຼື ບຸກຄົນ.




- ຄຳສັບ ຫຼື ສັນຍະລັກ ທີ່ສະແດງຄວາມຕ້ອງການເພີ່ມເຕີມ ຫຼື ຕ້ອງການໃຫ້ສິ່ງໃດສິ່ງໜຶ່ງເກີດຂຶ້ນອີກຄັ້ງ.







- ຄຳສັບ ຫຼື ສັນຍະລັກ ທີ່ສະແດງວ່າບໍ່ຕ້ອງການຫຍັງອີກ, ບາງສິ່ງບາງຢ່າງຫາຍໄປໝົດແລ້ວບໍ່ມີ ຫຼື ບໍ່ສາມາດໃຫ້ສິ່ງໃດໜຶ່ງສຳເລັດ.



# ການໝູນໃຊ້ກຸ່ມສັນຍະລັກ

ໃນບົດກ່ອນໆ ທ່ານໄດ້ຮຽນຮູ້ ການໝູນໃຊ້ກຸ່ມສັນຍະລັກ ເພື່ອສື່ສານກັບເດັກຫູໜວກມາແລ້ວ. ສຳລັບເດັກນ້ອຍຫູໜວກ ການຮຽນຮູ້ການໝູນໃຊ້ກຸ່ມສັນຍະລັກ ດ້ວຍຕົວຂອງເຂົາເອງນັ້ນ, ເດັກຕ້ອງຮູ້ສັນຍະລັກຕ່າງໆຫຼາຍສົມຄວນ ຈຶ່ງຈະສາມາດນຳເອົາສັນຍະລັກດັ່ງກ່າວມາປະສົມເຂົ້າກັນໃນຫຼາຍໆວິທີ.

## ► ວິທີກະຕຸ້ນໃຫ້ເດັກໝູນໃຊ້ສັນຍະລັກຕ່າງໆເຂົ້າກັນ

ເມື່ອເດັກໃຊ້ສັນຍະລັກດ່ຽວ, ຈົ່ງກະຕຸ້ນໃຫ້ເດັກຂະຫຍາຍຄວາມໝາຍສິ່ງທີ່ເຂົາເວົ້າເຖິງ ເຊິ່ງທ່ານກໍ່ສາມາດ:

- ຂະຫຍາຍສັນຍະລັກດັ່ງກ່າວ ດ້ວຍຕົວ ຂອງທ່ານກ່ອນ ແລ້ວຈຶ່ງກະຕຸ້ນໃຫ້ເດັກ ຮຽນແບບນຳທ່ານ.




- ຖາມຄຳຖາມ ແລະ ກະຕຸ້ນໃຫ້ເດັກຕອບ.




- ຖາມສິ່ງທີ່ເດັກກຳລັງເຮັດຢູ່.






**ນີ້ແມ່ນວິທີອື່ນໆອີກ ເພື່ອກະຕຸກຊຸກຍູ້ໃຫ້ເດັກໜູນໃຊ້ກຸ່ມສັນຍະລັກ:**

- ບອກໃຫ້ເດັກຖ່າຍທອດຂໍ້ຄວາມ ໂດຍ ໃຊ້ຄຳສັບທີ່ງ່າຍດາຍ.




- ພ້ອມນັ້ນກໍ່ເລົ່າເລື່ອງໃຫ້ເດັກຟັງ. ເມື່ອເດັກ ເຫັນທ່ານເລົ່າເລື່ອງຫຼາຍໆເທື່ອ, ລາວອາດສາ ມາດໃຊ້ສັນຍະລັກ ຈາກຕອນໃດຕອນໜຶ່ງ ຂອງ ບົດເລື່ອງ ດ້ວຍຕົວຂອງເຂົາເອງ.




- ກະຕຸ້ນໃຫ້ເດັກໄດ້ສະແດງ ໃນຫຼາຍໆບົດບາດ.






## ► ໝູນໃຊ້ຄຳຖາມເພື່ອກະຕຸ້ນໃຫ້ເດັກໄດ້ຄົ້ນຄິດ

ການຖາມຄຳຖາມ ແມ່ນວິທີໜຶ່ງທີ່ດີໃນການເຮັດໃຫ້ການສື່ສານກັນ ມີຄວາມຕໍ່ເນື່ອງ. ຄຳຖາມຍັງຊ່ວຍກະຕຸ້ນໃຫ້ເດັກນ້ອຍຫູໜວກ ໄດ້ຄົ້ນຄິດນຳອີກ.




- ມອບວຽກໃດໜຶ່ງໃຫ້ເດັກ ເພື່ອໃຫ້ເຂົາໄດ້ຄົ້ນຄິດຫາວິທີທາງໃໝ່ໆ. ຈາກນັ້ນກໍ່ກະຕຸ້ນໃຫ້ເຂົາສື່ສານກ່ຽວກັບສິ່ງທີ່ກຳລັງເຮັດຢູ່.







- ເມື່ອເດັກພົບກັບບັນຫາ, ຖາມເຂົາວ່າຈະແກ້ໄຂບັນຫາໄດ້ແນວໃດ.



- ເມື່ອສັງເກດເຫັນເດັກຫູໜວກ ກຳລັງສະແດງ ຄວາມຮູ້ສຶກ ແນວໃດແນວໜຶ່ງ, ຈົ່ງຖາມວ່າ ເຂົາ ກຳລັງຮູ້ສຶກແນວໃດ.

ຖ້າເຂົາມີບັນຫາໃນການຕອບ, ທຳອິດແມ່ນໃຫ້ຄິດ ເບິ່ງວ່າ ເຂົາຮູ້ຈັກບັນດາສັນຍະລັກທີ່ຈະໃຊ້ໃນການ ຕອບຄຳຖາມດັ່ງກ່າວ ຫຼື ບໍ່. ຖ້າບໍ່ ກໍ່ຈົ່ງຊ່ວຍໃຫ້ເຂົາ ຮຽນສັນຍະລັກດັ່ງກ່າວ.




ຄຳຖາມທີ່ມີລັກສະນະຖາມວ່າ “ຍ້ອນຫຍັງ, ເປັນ ຫຍັງ” ແມ່ນຂ້ອນຂ້າງສັບສົນສຳລັບເດັກ ນ້ອຍທີ່ຈະ ຕອບ. ເພາະວ່າ ຄຳຕອບຂອງຄຳຖາມລັກສະນະນີ້ ມັນຕ້ອງກວມລວມ ເອົາບັນດາສິ່ງຂອງ, ພຶດຕິກຳ ແລະ ຄວາມຮູ້ສຶກຢູ່ນຳ ເຊິ່ງສິ່ງເຫຼົ່ານີ້ແມ່ນມີຄວາມສຳ ຄັນສຳລັບ ພັດທະນາການຂອງເດັກໃນດ້ານທັກສະ ໃນການຄົ້ນຄິດ. ເດັກຕ້ອງໄດ້ຮັບການຝຶກແອບຫຼາຍ ເທື່ອ ເພື່ອຕອບຄຳຖາມເຫຼົ່ານີ້, ສະນັ້ນ ຈົ່ງສືບຕໍ່ໝູນ ໃຊ້ຄຳຖາມທີ່ມີລັກສະນະແບບນີ້. ຖ້າເດັກຍັງຄົງມີບັນ ຫາໃນການຕອບຄຳຖາມລັກສະນະນີ້ ຈົ່ງໃຫ້ທາງ ເລືອກແກ່ເດັກ.



## ▶ ວິທີຊ່ວຍໃຫ້ເດັກປະຕິບັດຕາມຄຳຂໍຮ້ອງແບບ 2 ຂັ້ນ

ເມື່ອເດັກຮູ້ຈັກສັນຍະລັກຕ່າງໆຫຼາຍຂຶ້ນ ສະແດງວ່າເຂົາສາມາດເລີ່ມນຳທັນຄຳຂໍຮ້ອງ ທີ່ຍາກຂຶ້ນ. ທ່ານສາມາດເລີ່ມຈາກການຂະຫຍາຍຄຳຂໍຮ້ອງແບບງ່າຍໆ ທີ່ເດັກຮູ້ຈັກແລ້ວ, ໂດຍປ່ຽນໃຫ້ຄຳຂໍຮ້ອງດັ່ງກ່າວມີ 2 ຂັ້ນ (ເທື່ອ).

ທຳອິດໃຫ້ສ້າງຄຳຂໍຮ້ອງທີ່ລູກຂອງທ່ານສາມາດເບິ່ງເຫັນໄດ້.







ຈາກນັ້ນ ຈຶ່ງຄ່ອຍໆເຮັດໃຫ້ ຄຳຂໍຮ້ອງດັ່ງກ່າວຍາກຂຶ້ນ.




## ▶ ຊ່ວຍໃຫ້ເດັກຮູ້ສັງເກດວ່າ ສັນຍະລັກຖືກສ້າງຂຶ້ນ ໂດຍອີງໃສ່ຄວາມໝາຍຂອງມັນ

ຄົນຫູໜວກຕື່ມຄວາມໝາຍໃຫ້ສັນຍະລັກໂດຍເຮັດໃຫ້ມັນໃຫຍ່ຂຶ້ນ ຫຼື ນ້ອຍລົງ, ເຮັດໃຫ້ສັນຍະລັກໄວຂຶ້ນ ຫຼື ຊ້າລົງ ຫຼື ໂດຍການປ່ຽນແປງສີໜ້າ.

ຊ່ວຍໃຫ້ເດັກເອົາໃຈໃສ່ວິທີຕ່າງໆໃນການໃຊ້ສັນຍະລັກ ເພື່ອໃຫ້ເດັກເຂົ້າໃຈຄວາມໝາຍຂອງຂໍ້ຄວາມທີ່ສົ່ງມາໄດ້ດີຂຶ້ນ.

*ຖ້າຢາກເວົ້າວ່າສິ່ງໃດສິ່ງໜຶ່ງມັນບໍ່ດີໃຫ້ເຮັດສັນຍະລັກແບບນີ້.*

*ຖ້າຢາກເວົ້າວ່າມັນບໍ່ດີຫຼາຍແທ້ໆ ກໍ່ໃຫ້ເຮັດສັນຍະລັກຄືເກົ່າ ແຕ່ໃຫ້ໃຫຍ່ຂຶ້ນ ແລະ ໄວຂຶ້ນກວ່າເກົ່າ.*



ການເລົ່າເລື່ອງ ແມ່ນວິທີທີ່ມ່ວນຊື່ນທີ່ສຸດ ສຳລັບການສອນພາສາມື ໃຫ້ແກ່ເດັກ. ຈົ່ງພະຍາຍາມໃຊ້ພາສາມືຫຼາຍໆແບບ ເມື່ອຫຼິ້ນເປັນຕົວລະຄອນທີ່ແຕກຕ່າງກັນ. ພ້ອມກັນນັ້ນ ກໍ່ຈົ່ງສະແດງຄວາມຮູ້ສຶກລົງໃນນ້ຳສຽງ ແລະ ເທິງສີໜ້າ (ເຊັ່ນ: ອາລົມມ່ວນຊື່ນ ຫຼື ຄວາມໂສກເສົ້າ) ເພື່ອສະແດງຄວາມຮູ້ສຶກຂອງບັນດາຕົວລະຄອນເຫຼົ່ານັ້ນ.







ສັນຍະລັກຂອງ “ພໍ່ໝີ”




ສັນຍະລັກຂອງ “ລູກໝີ”

ການໃຊ້ສັນຍະລັກ ສຳລັບຕົວລະຄອນຫຼາຍໆຕົວ ຈະຊ່ວຍໃຫ້ເດັກໃຫ້ມີຄວາມສົນໃຈແກ່ນິດເລື່ອງດັ່ງກ່າວ. ມັນຍັງຊ່ວຍໃຫ້ເດັກສາມາດເຫັນການສະແດງອອກ ທາງດ້ານຄວາມຮູ້ສຶກ, ສີໜ້າ ແລະ ວິທີທີ່ແຕກຕ່າງໃນການນຳໃຊ້ສັນຍະລັກໃນພາສາມື.

# ການສອນພາສາມືໃຫ້ແກ່ພໍ່ແມ່ຂອງເດັກຫູໜວກ

ບຸກຄົນທີ່ສາມາດໃຊ້ພາສາມືເປັນພາສາທີໜຶ່ງ ສາມາດສອນໃຫ້ຜູ້ເປັນພໍ່ແມ່ ໃຫ້ສາມາດສື່ສານກັບເດັກອ່ອນ ແລະ ເດັກນ້ອຍທີ່ຫູໜວກໄດ້.

ນີ້ແມ່ນບົດເລື່ອງກ່ຽວກັບສະມາຄົມຂອງແມ່ ຂອງເດັກຫູໜວກຊາວອິນເດຍກຸ່ມໜຶ່ງ ທີ່ອາໄສຢູ່ປະເທດອັງກິດ. ຜູ້ຊຶ່ງຮຽນພາສາມືຂອງອັງກິດ ຈາກຄູສອນຫູໜວກ. ກ່ອນໜ້າການຮຽນພາສາມື, ທັງເດັກນ້ອຍຫູໜວກ ແລະ ພໍ່ແມ່ຂອງພວກເຂົາແມ່ນມີບັນຫາໃນການສື່ສານ ເພາະວ່າ ມັນຫຍຸ້ງຍາກສຳລັບພວກເຂົາໃນການເຂົ້າໃຈຊຶ່ງກັນ ແລະ ກັນ. ເຊິ່ງການຮຽນພາສາມືໄດ້ປ່ຽນແປງສິ່ງເຫຼົ່ານີ້.

## ການໝູນໃຊ້ພາສາມືເພື່ອຜ່ານຜ່າອຸປະສັກທາງພາສາ

"ລີຊ້າ" ແມ່ນຍິງຊາວອັງກິດເຊິ່ງຫູໜວກຕັ້ງແຕ່ກຳເນີດ. ຫຼັງຈາກສຳເລັດການສຶກສາຈາກໂຮງຮຽນສ້າງຄູ. ລາວໄດ້ເຮັດວຽກເປັນຄູສອນເດັກຫູໜວກ. ວຽກຂອງນາງ ແມ່ນການຊ່ວຍເຫຼືອໃຫ້ແມ່ຂອງບັນດາເດັກຫູໜວກຮຽນຮູ້ພາສາມື. ໃນບັນດາກຸ່ມທີ່ ລີຊ້າ ສອນນັ້ນ ແມ່ນກຸ່ມຂອງແມ່ຍິງຊາວອິນເດຍ ທີ່ບໍ່ສາມາດເວົ້າພາສາອັງກິດໄດ້. ທຳອິດແມ່ນຫຍຸ້ງຍາກສຳລັບ "ລີຊ້າ" ແລະ ກຸ່ມແມ່ຂອງເດັກຫູໜວກດັ່ງກ່າວທີ່ຈະສື່ສານນຳກັນ. ລີຊ້າ ໃຊ້ພາສາມືຂອງອັງກິດ ແລະໃຫ້ອາຈານອີກຄົນໜຶ່ງແປເປັນພາສາເວົ້າຂອງອັງກິດ. ຈາກນັ້ນຈຶ່ງໃຫ້ແມ່ຍິງອີກຄົນໜຶ່ງແປຈາກພາສາອັງກິດ ເປັນພາສາ "ປັນຈາບີ" (ພາສາໜຶ່ງໃນປະເທດອິນເດຍ) ເຊິ່ງເປັນພາສາທີ່ກຸ່ມແມ່ຂອງເດັກຫູໜວກ ກຸ່ມນີ້ສາມາດເຂົ້າໃຈໄດ້ທຸກຄົນ.

ກຸ່ມແມ່ຂອງເດັກຫູໜວກ ເລີ່ມຕົ້ນຈາກການຮຽນສັນຍະລັກທີ່ກ່ຽວກັບເຮືອນ. ພ້ອມນັ້ນກໍ່ຮຽນສັນຍະລັກຕ່າງໆ ທີ່ເດັກນ້ອຍຮຽນຢູ່ໃນຫ້ອງຮຽນ ເຊິ່ງຊ່ວຍໃຫ້ພໍ່ແມ່ເຂົ້າໃຈ ແລະສາມາດສື່ສານກັບເດັກນ້ອຍໄດ້ເມື່ອຢູ່ບ້ານ.

ຫຼັງຈາກນັ້ນ, ຈຶ່ງມີອາຈານຜູ້ຊາຍເຂົ້າມາຮ່ວມໃນກຸ່ມຂອງ ລີຊ້າ. ອາຈານຄົນນີ້ສອນບັນດາພໍ່ ແລະອ້າຍ ຂອງເດັກຫູໜວກສຳລັບກຸ່ມຜູ້ຊາຍ. ໃນທັງສອງກຸ່ມນີ້, ພໍ່ແມ່ທີ່ມີເດັກຫູໜວກທີ່ໃຫຍ່ແລ້ວ ກັບຜູ້ທີ່ຍັງມີລູກຫູໜວກທີ່ຍັງນ້ອຍໄດ້ແລກປ່ຽນປະສົບການນຳກັນ. ນີ້ເປັນໂອກາດດີໃຫ້ ພວກເຂົາໝູນໃຊ້ທັກສະທາງພາສາມືໃໝ່ໆ ເພື່ອສົນທະນາກ່ຽວກັບສິ່ງຕ່າງໆ ທີ່ມີຄວາມສຳຄັນສຳລັບພວກເຂົາ.

ການໄດ້ເຫັນ ລີຊ້າ ເຮັດວຽກ ແລະ ກໍ່ສິດສອນ, ເຮັດໃຫ້ບັນດາພໍ່ແມ່ເຫຼົ່ານັ້ນເຫັນໂອກາດທີ່ລູກຂອງຕົນສາມາດກາຍເປັນອາຈານ, ທາລ້ຽງຊີບ ແລະ ໄດ້ຮັບຄວາມເຄົາລົບນັບຖືຈາກຄົນອື່ນໆ. ຫຼາຍໆຄອບຄົວໃນຊຸມຊົນດັ່ງກ່າວ ຮຽນຮູ້ຫຼາຍສິ່ງຫຼາຍຢ່າງກ່ຽວກັບຄົນຫູໜວກ ໄປພ້ອມກັບການຮຽນຮູ້ວິທີສື່ສານກັບຄົນຫູໜວກໃນເວລາດຽວກັນ.



## ຄຳແນະນຳສຳລັບຜູ້ໃຫຍ່ໃນການຮຽນພາສາມື

ສຳລັບພາສາມື ຈຸດໜັກແມ່ນຂຶ້ນກັບວິທີທີ່ທ່ານສະແດງອອກ ໂດຍຜ່ານທຸກພາກສ່ວນຂອງຮ່າງກາຍ. ວິທີທີ່ທ່ານຢືນ, ການສະແດງອອກທາງສີໜ້າເພື່ອສື່ສານ ແລະ ການສະແດງອອກໂດຍຜ່ານມື.

ຄົນຫູໜວກກໍ່ສັງເກດໃບໜ້າຂອງຄູ່ສົນທະນາທີ່ພວກເຂົາກຳລັງສື່ສານນຳ, ບໍ່ແມ່ນພຽງແຕ່ສັງເກດມືເທົ່ານັ້ນ, ກໍ່ຄືກັນກັບຄົນທີ່ໄດ້ຍິນປົກກະຕິ ສື່ສານນຳກັນກໍ່ສັງເກດເບິ່ງໃບໜ້າໄປພ້ອມໆ ກັບການຟັງ.

- ສະແດງທ່າທາງທີ່ທ່ານຕ້ອງການເວົ້າ. ບໍ່ຕ້ອງກັງວົນວ່າ ທ່ານຈະເຮັດຜິດ ຫຼື ເປັນຄືຄົນໂງ່.
- ໝູນໃຊ້ທຸກສິ່ງທຸກຢ່າງ ເພື່ອຊ່ວຍໃນການສື່ສານ ເຊັ່ນ: ທ່າທີ, ການສະແດງອອກທາງສີໜ້າ, ການເຄື່ອນເໜັງຂອງຮ່າງກາຍ, ການໃຊ້ນິ້ວມືສະກົດເປັນຕົວອັກສອນ (ການສະກົດຕົວອັກສອນໂດຍໃຊ້ສັນຍະລັກສຳລັບຕົວອັກສອນແຕ່ລະຕົວ). ລອງສື່ສານຄວາມຄິດເຫັນ ຫຼື ປະໂຫຍກທີ່ງ່າຍດາຍ ໂດຍບໍ່ໝູນໃຊ້ບັນດາສັນຍະລັກທາງການທີ່ເຄີຍໃຊ້. ໃຫ້ລອງໃຊ້ທ່າທາງ, ການສະແດງສີໜ້າ ແລະ ການຊີ້ບອກແທນ. ເພາະໃນກໍລະນີທີ່ ທ່ານບໍ່ຮູ້ ຫຼື ລືມສັນຍະລັກທີ່ເຄີຍໃຊ້, ທ່ານກໍ່ຍັງສາມາດສື່ສານກັບຄົນຫູໜວກໄດ້ໂດຍໃຊ້ວິທີນີ້.
- ຄົນແຕ່ລະຄົນຮຽນຮູ້ພາສາໂດຍວິທີທາງທີ່ແຕກຕ່າງກັນ ແລະ ໃນບາດກ້າວທີ່ບໍ່ຄືກັນ. ຈົ່ງຮຽນໃຫ້ຫຼາຍເທົ່າທີ່ຈະຫຼາຍໄດ້. ບໍ່ຄວນກັງວົນວ່າ ມັນເປັນສິ່ງທີ່ຄົນອື່ນໄດ້ຮຽນ ຫຼື ບໍ່ເຄີຍຮຽນມາກ່ອນ. ເພາະວ່າ ເປົ້າໝາຍຫຼັກຂອງທ່ານແມ່ນເພື່ອຊ່ວຍລູກຂອງທ່ານ ບໍ່ແມ່ນເພື່ອແຂ່ງຂັນກັບຄົນອື່ນ.
- ເພື່ອຮຽນພາສາມືແທ້ໆ, ຈົ່ງໃຊ້ພາສາມືກັບຄົນຫູໜວກທີ່ໃຊ້ພາສາດັ່ງກ່າວ.




ການຮຽນຮູ້ພາສາມືອາດຈະບໍ່ແມ່ນເລື່ອງງ່າຍ. ແຕ່ຈົ່ງຈື່ໄວ້ວ່າ, ສິ່ງສຳຄັນແມ່ນເພື່ອໃຫ້ລູກຂອງທ່ານມີພາສາທີ່ພວກທ່ານສາມາດສື່ສານນຳກັນໄດ້. ສືບຕໍ່ຝຶກຝົນມັນເລື້ອຍໆ ເພາະວ່າ ຖ້າບໍ່ໝູນໃຊ້ມັນ ທ່ານກໍ່ຈະລືມມັນໄປເໝືອນກັບພາສາອື່ນໆ ທີ່ທ່ານໄດ້ຮຽນມາ.